# ເສັ້ງຕົ້ນບົດທີ 1

1. ເມື່ອໂປໂລຈະເດີນທາງໄປປະກາດຂ່າວປະເສີດເທື່ອທີ 3, ເພິ່ນແວ່ຢູ່ເມືອງທີ່ຕີໂມທຽວເກີດ ພ້ອມກັບຄຣິດສະຕະຈັກອື່ນ ໆ ໃນເຂດຄາລາເຕຍ.
   ກ. ໂປໂລຂໍໃຫ້ຄຣິດສະຕະຈັກເຫຼົ່ານັ້ນຊ່ວຍໃນການໃດ? ______________________________

   ____________________________________________________________________

   ຂ. ແຂວງຄາລາເຕຍໝາຍໂດຍຕົວອັກສອນໃດ ໃນແຜນທີ່ນີ້? ______________________




2. ກ. ມີຄຣິດສະຕຽນໃໝ່ມາເອເຟໂຊກ່ອນໂປໂລກັບຄືນ ເພິ່ນຊື່ຫຍັງ? ________________
   ຂ. ແມ່ນໃຜຕ້ອນຮັບເພິ່ນ ແລະອະທິບາຍໃຫ້ຮູ້ທາງຂອງພະເຈົ້າຢ່າງຖືກຕ້ອງ? __________
   ຄ. ຄຣິດສະຕຽນໃໝ່ຄົນນັ້ນຮູ້ແຕ່ບັບຕິດສະມາຂອງໃຜ? ___________________________
   ງ. ອາໂປໂລເດີນທາງຕໍ່ໄປ ເພື່ອຈະຢ້ຽມຄຣິດສະຕະຈັກໃນເມືອງໃດ? _______________
   ຈ. ເລີຍເກີດບັນຫາໃດມາ? ____________________________________________
   ສ. ອາໂປໂລເກີດໃນເມືອງໃດ? _________________________________________
   ຊ. ທະວີບໃດ? ___________________________________________________
   ຍ. ຊາດໃດ? _____________________________________________________

3. ໃຫ້ກັບໄປເບິ່ງແຜນທີ່ອີກ.
   ກ. ແຂວງອາເຊຍໝາຍໄວ້ໂດຍອັກສອນໃດ? _____________________________
   ຂ. ເມືອງເອເຟໂຊໝາຍໂດຍອັກສອນໃດ? _______________________________

# ເສັ້ງປາຍບົດທີ 1

1. ໂປໂລຢາກປະກາດຂ່າວປະເສີດໃນແຂວງອາເຊຍຕັ້ງແຕ່ດົນແລ້ວ.
   ກ. ຕັ້ງຕົ້ນປະກາດຂ່າວປະເສີດ ຕັ້ງແຕ່ເມືອງໃດ? ______________________________
   ຂ. ໝາຍໂດຍຕົວອັກສອນໃດ ໃນແຜນທີໜ້າ 144? ____________________________
2. ມີວິຫານໃຫຍ່ຂອງພະໃດ? ________________________________________________
3. ກ. ໂປໂລຫາລ້ຽງຊີບຢ່າງໃດໃນເມືອງນີ້? ____________________________________
   ຂ. ເພິ່ນຮ່ວມກັບໃຜເຮັດວຽກນີ້? _________________________________________
   ຄ. ເຫັນວ່າ ຄວນຊ່ວຍພວກໃດອີກ? ________________________________________
4. ໂປໂລປະກາດພະປະສົງຂອງພະເຈົ້າໃນບ່ອນໃດ? _____________ ແລະ ___________
5. ໂປໂລມາເຖິງແຂວງອາເຊຍແລ້ວ ເຫັນບໍ່ຫຼາຍຄົນມາຮ່ວມປະຊຸມ.
   ກ. ມີຈັກຄົນຮ່ວມປະຊຸມ? _______________________________________________
   ຂ. ເໝືອນຢ່າງອາໂປໂລ ເຂົາຮູ້ແຕ່ເລື່ອງບັບຕິດສະມາຂອງໃຜ? ____________________
   ຄ. ແລະເຂົາບໍ່ເຄີຍໄດ້ຍິນເລື່ອງຂອງໃຜ? _____________________________________
6. ກ. ໂປໂລໃຫ້ເຂົາຮັບບັບຕິດສະມາໃນພະນາມໃດ? _____________________________
   ຂ. ໂປໂລວາງຫຍັງໃສ່ເຂົາ? _______________________________________________
   ຄ. ແມ່ນຫຍັງສະເດັດລົງມາເທິງເຂົາ? _______________________________________
   ງ. ມີຜົນຮັບສອງປະການໃດ? _____________________ ແລະ _________________
7. ຈາກນັ້ນໂປໂລຂຽນຈົດໝາຍໄປຫາເຂົາ.
   ກ. ຕັກເຕືອນຢ່າເຮັດຫຍັງໃຫ້ພະວິນຍານ? ___________________________________
   ຂ. ຈົ່ງເຮັດຫຍັງ? _____________________________________________________

# ເສັ້ງຫຼັງປະຊຸມບົດທີ 1

1. ໃນ ເອເຟໂຊ ບົດທີ 1, ໂປໂລຍົກຕົວຢ່າງ 3 ປະການ ທີ່ສະແດງເຖິງອຳນາດຂອງພະວິນຍານ. ໃຫ້ຈົດທັງ 3 ປະການ:
   ກ. _________________________________ ອຟຊ 1 ຂໍ້ໃດ? ____________________
   ຂ. _________________________________ ອຟຊ 1 ຂໍ້ໃດ? ____________________
   ຄ. _________________________________ ອຟຊ 1 ຂໍ້ໃດ? ____________________
2. ນົກປະເພດໃດ ເປັນສັນຍາລັກຂອງພະວິນຍານ? _____________________________
3. ພວກລູກຊາຍຂອງຊະເກວາເຫັນໂປໂລ ຂັບໄລ່ຜີອອກໂດຍໃຊ້ພະນາມຂອງພະເຢຊູ.
   ກ. ເມື່ອເຂົາພະຍາຍາມເຮັດຕາມ ຜີຮ້າຍເຫຼົ່ານັ້ນຕອບຢ່າງໃດ? ____________________
   ຂ. ພວກລູກຊາຍຂອງຊະເກວາຂາດອຳນາດໃດ? ______________________________

# ເສັ້ງຕົ້ນບົດທີ 2

1. ມາເຖິງເອເຟໂຊແລ້ວ ໂປໂລສອນຢູ່ບ່ອນໃດເປັນເວລາ 3 ເດືອນ? ________________
2. ເໝືອນຢ່າງທີ່ອື່ນໆ ພວກຢິວທີ່ບໍ່ເຊື່ອ ຕໍ່ຕ້ານຈົນຕ້ອງເລີກເທດສະໜາໃນບ່ອນນັ້ນ.
   ກ. ອອກຈາກໂຮງທຳ ແລ້ວໂປໂລໄປສອນຢູ່ໃສ? ______________________________
   ຂ. ສອນຢູ່ບ່ອນນັ້ນ ດົນປານໃດ? ________________________________________
   ຄ. ຂ່າວປະເສີດແຜ່ອອກໄປທົ່ວແຂວງໃດ? __________________________________
3. ມີຄຣິດສະຕະຈັກຕັ້ງໄວ້ອີກໃນ 3 ເມືອງຄື ລາວດີເກອາ ເຮຍລາໂປລີ ແລະ ໂກໂລຊາຍ. ໂປໂລຂຽນຈົດໝາຍໄປເຖິງສອງຄຣິດສະຕະຈັກນັ້ນ.
   ກ. ຈົດໝາຍສະບັບໃດທີ່ເຮົາຍັງມີຢູ່ໃນພະຄຳພີໃໝ່? ___________________________
   ຂ. ຈົດໝາຍສະບັບໃດທີ່ຫາຍໄປແລ້ວ? ____________________________________
4. ກ. ເຈົ້າຂອງທາດຈາກໂກໂລຊາຍ ທີ່ມາຮັບເຊື່ອຊື່ຫຍັງ? ___________________________
   ຂ. ເມືອງໂກໂລຊາຍໝາຍໄວ້ໂດຍອັກສອນໃດ ໃນແຜນທີ່ໜ້າ 144? ______________
5. ກ. ໃນເມືອງເອເຟໂຊ ໂປໂລເຮັດການອັດສະຈັນສອງຢ່າງຄືຢ່າງໃດ? ________________
   ຂ. ເຂົາເອົາຜ້າຢ່າງໃດ ວາງໃສ່ຄົນປ່ວຍ? ___________________________________
6. ກ. ແມ່ນໃຜທີ່ພະຍາຍາມຂັບໄລ່ຜີຮ້າຍອອກ ຕາມແບບໂປໂລ? __________________
   ຂ. ຄົນທີ່ມີຜີສິງເຮັດຍັງ? _______________________________________________
   ຄ. ພວກເຂົາໜີອອກຈາກເຮືອນຕົວເປົ່າແລະເປັນຫຍັງ? ___________________________
7. ກ. ຄຣິດສະຕຽນທີ່ຍັງໃຊ້ເວດມົນຄາຖາ ເອົາຕຳລາໄປເຮັດຫຍັງ? __________________
   ຂ. ສິ່ງທີ່ເຂົາເຜົາມີລາຄາເທົ່າໃດ? ________________________________________
8. ໂປໂລເຕືອນບໍ່ໃຫ້ພີ່ນ້ອງໃນໂກລິນໂທ ບໍ່ໃຫ້ຄົບຫາກັບຄົນຢ່າງໃດ? ________________

# ເສັ້ງປາຍບົດທີ 2

1. ກ. ໂປໂລຕັ້ງໃຈຈະຈາກເອເຟໂຊໄປ. ເພິ່ນໃຊ້ເອລາຊະໂຕກັບອີກຄົນໃດໄປມາເກໂດເນຍກ່ອນ? ___________________________________________________________
   ຂ. ໄປມາເກໂດເນຍແລະອະຂາຢາແລ້ວ ໂປໂລຍັງຢາກໄປສອງກຸງໃດ? ______________
2. ແມ່ນສອງຄົນໃດ ທີ່ຊ່ຽງຊີວິດເພື່ອປ້ອງກັນຊີວິດຂອງໂປໂລ? _____________________
3. ໃນເວລາດຽວກັນ ໂປໂລຮັບການລຳບາກໃນເມືອງເອເຟໂຊ ເພິ່ນຮັບຂ່າວບໍ່ດີຈາກເມືອງໂກລິນໂທອີກ.
   ກ. ແມ່ນໃຜມາກ່າວຂ່າວບໍ່ດີ? ____________________________________________
   ຂ. ຄຣິດສະຕຽນໃນເມືອງໂກລິນໂທແຍກເປັນ 4 ພວກໃດ? ________________________
   _______________________________________________________________

4. ກ. ໂປໂລຂຽນຈົດໝາຍສະບັບໃດເພື່ອແກ້ໄຂບັນຫານັ້ນ? ________________________
   ຂ. ບົດໃດ ຂໍ້ໃດ ຊີ້ບອກວ່າເພິ່ນຂຽນຈົດໝາຍຈາກເອເຟໂຊ? ______________________

5. ນອກຈາກບັນຫາທີ່ພີ່ນ້ອງແຍກເປັນພັກເປັນພວກ ຍັງມີບັນຫາອີກຫຼາຍຢ່າງທີ່ໂປໂລຍົກແກ້ໃນພະທຳ 1 ໂກລິນໂທ ເຊັ່ນ:
   ກ. ໃນ 1 ກລທ ບົດ 5, ໂປໂລວ່າກ່າວຄົນທີ່ຫຼິ້ນຊູ້. ເພິ່ນນອນກັບໃຜ? ________________
   ຂ. ໃນ 1 ກລທ ບົດ 6, ໂປໂລຕໍ່ວ່າຄຼິດສະຕຽນທີ່ມີຄວາມກັນ ເພາະເຂົາສູ້ຄວາມກັນຕໍ່ໜ້າໃຜ?
   ________________________________________________________________
   ຄ. ໃນ 1 ກລທ ບົດ 7, ໂປໂລຕອບຄຳຖາມເລື່ອງຫຍັງ? __________________________
   ງ. ໃນ 1 ກລທ ບົດ 8, ໂປໂລຕອບເລື່ອງຊີ້ນທີ່ເຂົາຊື້ຢູ່ຕະຫຼາດ, ເປັນຊີ້ນຢ່າງໃດ? ______
   ________________________________________________________________
   ຈ. ໃນ 1 ກລທ ບົດ 9, ມີບາງຄົນທີ່ຫາວ່າໂປໂລບໍ່ເປັນສາວົກແທ້ ເພາະເພິ່ນຫາລ້ຽງຊີບດ້ວຍຕົນເອງ. ທີ່ຈິງໂປໂລທັງສາວົກທົ່ວໄປມີສິດຈະໄດ້ຮັບປະໂຫຍດຈາກໃຜ? ___________
   ສ. ໃນ 1 ກລທ ບົດ 10, ໂປໂລຍົກເລື່ອງສິນໃດ? ______________________________
   ຊ. ໃນ 1 ກລທ ບົດ 11, ໂປໂລຕິເລື່ອງສິ່ງໃດທີ່ເກີນສົມຄວນ? ____________________
   ຍ. ໃນ 1 ກລທ ບົດ 12-14, ໂປໂລແກ້ເລື່ອງຂອງພະລາຊະທານຢ່າງໃດ? ____________
   ດ. ໃນ 1 ກລທ ບົດ 15, ໂປໂລຕອບຄົນທີ່ປະຕິເສດຄວາມຈິງເລື່ອງຫຍັງ? ____________

## ເສັ້ງຫຼັງປະຊຸມບົດທີ 2

1. ພີ່ນ້ອງຄຼິດສະຕຽນໃນເມືອງໂກໂລຊາຍ ຮ່ວມປະຊຸມໃນເຮືອນໃຜ? _________________

2. ກ. ແມ່ນໃຜທີ່ຕັ້ງຕົ້ນປະກາດຂ່າວປະເສີດໃນເມືອງນັ້ນ? _________________________
   ຂ. ເພິ່ນຊ່ວຍອີກສອງຄຼິດສະຕະຈັກໃດໃນແຂວງອາເຊຍ? ________________________
   ________________________________________________________________

3. ໂປໂລຕອບເລື່ອງບັນຫາຈັກປະການ ໃນຄຼິດສະຕະຈັກໂກໂລຊາຍ? _________________

# ເສັ້ງຕົ້ນບົດທີ 3

1. ເມື່ອໂປໂລຍັງຢູ່ເອເຟໂຊ ເພິ່ນຮັບຂ່າວບໍ່ດີເລື່ອງຄຼິດສະຕະຈັກໂກລິນໂທ. ເຖິງບໍ່ໄດ້ລາຍງານໃນ ພະທຳກິດຈະການ ເຮົາຮູ້ຢູ່ແລ້ວວ່າເພິ່ນກັບໄປຢ້ຽມເຂົາອີກ. ຕອນນັ້ນໃຈຂອງໂປໂລເປັນຢ່າງໃດ? ____________________________________________
2. ຄຼິດສະຕະຈັກໃນເມືອງໂກລິນໂທ ຍິງທະວີການອະທຳຂື້ນ ຈົນກວ່າໂປໂລຂຽນຈົດໝາຍອີກ. (ຈົດໝາຍ ທວ່າງກາງນີ້ຫາຍໄປແລ້ວ ດັ່ງນັ້ນບໍ່ມີໃນພະຄຳພີໃໝ່). ໂປໂລຝາກຈົດໝາຍສະບັບນີ້ໄວ້ກັບໃຜ? ____________________________________________
3. ໃນລະຫວ່າງນັ້ນ ມີບັນຫາໃຫຍ່ເກີດຂື້ນໃນເມືອງເອເຟໂຊ.
   ກ. ຊ່າງຕີເງິນທີ່ກໍ່ຄວາມວຸ້ນວາຍຕໍ່ສູ້ໂປໂລ ຊື່ຫຍັງ? ______________________
   ຂ. ເພິ່ນໄດ້ກຳໄລໂດຍການສ້າງຮູບວິຫານໃດຂາຍ? ______________________
   ຄ. ຫຼາຍຄົນມາເຊື່ອເປັນຄຼິດສະຕຽນ ຈົນການຄ້າຂອງເດເມທີໂອເປັນຢ່າງໃດ? ________
4. ເມື່ອປະຊາຊົນວຸ້ນວາຍເຊັ່ນນັ້ນຈຶ່ງດຶງລາກເອົາໝູ່ຂອງໂປໂລສອງຄົນໄປສະໜາມລະຄອນ. ຜູ້ໜຶ່ງນັ້ນຊື່ ຄາໂຍ ອີກຜູ້ໜຶ່ງທີ່ມາຈາກເທຊະໂລນິກ ຊື່ຫຍັງ? ______________________
5. ກ. ຝູງຊົນພາກັນຄຽດແຄ້ນ ແລະຮ້ອງຂື້ນຢ່າງໃດ? ______________________
   ຂ. ໂປໂລຮູ້ເລື່ອງແລ້ວຢາກເຂົ້າໄປຖ່າມກາງໃຜ? ______________________
   ຄ. ແຕ່ພວກລູກສິດຫ້າມຫຍັງ? ______________________
6. ກ. ປະຊາຊົນຮ້ອງຢ່າງນັ້ນດົນປານໃດ? ______________________
   ຂ. ຄົນໃດຊັກຊວນໃຫ້ປະຊາຊົນກັບໄປບ້ານ? ______________________
7. ກ. ເພາະເຫດນັ້ນ ໂປໂລຕັດສິນໃຈວ່າຈະລາຈາກເອເຟໂຊໄປ. ເພິ່ນໄປລໍຖ້າບໍ່ພົບຕີໂຕຢູ່ເມືອງໃດ? ______________________
   ຂ. ຜົນສຸດທ້າຍພົບກັນຢູ່ໃສ? ______________________
8. ໃຫ້ທ່ານເປີດເບິ່ງແຜນທີ່ໜ້າ 144 ອີກ. ເອເຟໂຊໝາຍໂດຍຕົວອັກສອນໃດ? ________
9. ໂທອາດ ຄືອັກສອນໃດ? ______________________
10. ຟີລິບປອຍໝາຍອັກສອນໃດ? ______________________
11. ໂກລິນໂທ ໝາຍອັກສອນໃດ? ______________________

# ເສັ້ງປາຍບົດທີ 3

1. ກ. ໂປໂລລໍຖ້າຕີໂຕຢ່າງບໍ່ສຳເລັດໃນບ່ອນໃດ? ______________________
   ຂ. ຜົນສຸດທ້າຍໂປໂລພົບຕີໂຕໃນແຂວງໃດ? ______________________
   ຄ. ໝາຍໃນແຜນທີ່ໜ້າ 144 ໂດຍອັກສອນໃດ? ______________________
   ງ. ມີອີກຄົນໃດ ທີ່ມາຮ່ວມກັບໂປໂລໃນແຂວງນັ້ນ (ບໍ່ໄດ້ຢູ່ກັບໂປໂລຕັ້ງແຕ່ 6 ປີແລ້ວ)? ____

2. ກ. ໂປໂລເດີນທາງຈາກໂກລິນໂທໄປປະກາດຂ່າວປະເສີດໃນແຂວງໃດອີກ? (ດຽວນີ້ຄືປະເທດອັນເບເນຍ) ______________________
   ຂ. ໃນແຜນທີ່ໜ້າ 144 ໝາຍໂດຍອັກສອນໃດ? ______________________

3. ກ. ໂປໂລຂຽນ 2 ກລທ ຈາກບ່ອນໃດ? ______________________
   ຂ. ຝາກໄປໂກລິນໂທກັບໃຜ? ______________________
   ຄ. ໂກລິນໂທຢູ່ແຂວງໃດ? ______________________
   ງ. ແຂວງນັ້ນໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ______________________

4. ໃນລາຍຊື່ຕໍ່ໄປນີ້ມີເຫດ 6 ປະການ, ທີ່ໂປໂລຝາກຈົດໝາຍ 2 ໂກລິນໂທ. ໃຫ້ທ່ານໝາຍເອົາເຫດ 6 ປະການລຸ່ມນີ້ໄວ້.
   ກ. ເພື່ອຕອບຄົນທີ່ຫາຄວາມວ່າໂປໂລປີ້ນແປໄປມາ
   ຂ. ໃຫ້ເຂົາຈັດການຕຽມເຄື່ອງສິ່ງເຄາະໄວ້ໃຫ້ພ້ອມຈະຝາກໄປເຢລູຊາເລັມ
   ຄ. ສະແດງຄວາມຍິນດີທີ່ເຂົາຕຽມສິ່ງເຄາະໄວ້ກ່ອນແລ້ວ
   ງ. ຊັກຊວນໃຫ້ເຂົາລົງໂທດ ໃຫ້ຄົນທີ່ຕົກໃນບາບໜັກ
   ຈ. ຂໍໃຫ້ເຂົາຍົກໂທດໃຫ້ຄົນທີ່ຕົກໃນບາບແລະກັບໃຈໃໝ່
   ສ. ກ່າວຫາອັກຄະສາວົກທຽມທີ່ຕໍ່ຕ້ານໂປໂລ
   ຊ. ສະແດງຄວາມຍິນດີທີ່ບໍ່ມີໃຜຕໍ່ສູ້ຊຶ່ງຄຣິດສະຕຽນ
   ຍ. ສະແດງຄວາມຍິນດີທີ່ຕີໂຕໄປຫາເຂົາໂດຍເກີດຜົນດີ
   ດ. ບອກເຂົາວ່າ ຈະບໍ່ໄປຢ້ຽມເຂົາອີກ
   ຕ. ບອກເຂົາວ່າ ຈະໄປຢ້ຽມອີກ(ເປັນເທື່ອທີ 3)

## ເສັ້ງຫຼັງປະຊຸມບົດທີ 3

1. ໃນ 2 ກລທ ນີ້ ໂປໂລກ່າວເຖິງການໜັກໃຈຍ້ອນຄວາມທຸກລໍາບາກທີ່ເກີດຂຶ້ນແກ່ເພິ່ນໃນແຂວງອາເຊຍ.
   ກ. ໂປໂລໜັກໃຈເຫຼືອກໍາລັງຈົນໝົດຫວັງຢ່າງໃດ? ______________________
   ຂ. ເລື່ອງນັ້ນເຫັນໃນບົດໃດ ຂໍ້ໃດ?(ເປີດເບິ່ງໃນພະຄໍາພີກໍໄດ້) ______________________

2. ກ. ກີເດໂອນມີທະຫານໄປນໍາຈັກຄົນ? ______________________
   ຂ. ເຂົາຖືຫຍັງແທນອາວຸດ? ______________________
   ຄ. ແມ່ນໂດຍອໍານາດໃດ ທີ່ເຂົາເອົາຊະນະສັດຕູຫຼາຍພັນຄົນທີ່ມີອາວຸດ? ______________________

3. ກ. ໂລກຖືວ່າຄວາມຕາຍເປັນສິ່ງທີ່ເໝັນ ແຕ່ຄຣິດສະຕຽນຖືວ່າເປັນສິ່ງທີ່ຫອມ ເພາະນໍາໄປເຖິງຫຍັງ? ______________________
   ຂ. ຄຣິດສະຕຽນຍອມເປັນທາດຂອງໃຜ ຈຶ່ງຈະເອົາຊະນະ? ______________________

4. ກ. ຕາມໃນ 2 ກລທ 1:4-7 ຄົນທີ່ເຄີຍທຸກລໍາບາກສາມາດຊ່ວຍຄົນຢ່າງໃດ? ______________________
   ຂ. 2 ກລທ 4:16-18 ທີ່ຮ່າງກາຍອ່ອນກໍາລັງ ແຕ່ມີສ່ວນໃດແຂງແຮງຂຶ້ນໃນເວລາດຽວກັນ? __

# ເສັງຕົ້ນບົດທີ 4

1. ກ. ໂປໂລປະກາດພະທຳໃນແຂວງມາເກໂດເນຍແລະອີລີລີກົນ ແລ້ວໄປເມືອງໃດ? ______
   ຂ. ໃນແຂວງໃດ? ______
   ຄ. ຢູ່ຈັກເດືອນ? ______
   ງ. ຂຽນຈົດໝາຍໃດຈາກບ່ອນນັ້ນ? ______
   ຈ. ຢູ່ໃນເຮືອນຂອງໃຜ? ______
   ສ. ອາຍຸຈັກປີເວລາຂຽນຈົດໝາຍສະບັບນັ້ນ? ______
   ຊ. ຂຽນໃນເທື່ອໃດ ທີ່ອອກເດີນທາງໄປປະກາດພະທຳ? ______
   ຍ. ແມ່ນໃຜເອົາຈົດໝາຍນັ້ນໄປໃຫ້ຄຼິດສະຕະຈັກທີ່ຮັບເອົາ? ______
   ດ. ນາງນັ້ນຢູ່ເມືອງໃດ? ______
2. ກ. ໂປໂລຂໍໃຫ້ຄຼິດສະຕະຈັກໃດ ຊ່ວຍຈັດສິ່ງໃຫ້ໃນການປະກາດພະທຳໄປເຖິງທາງທິດຕາເວັນຕົກ? ______
   ຂ. ໝາຍໄວ້ໃນແຜນທີ່ໜ້າ 144 ໂດຍອັກສອນໃດ? ______
   ຄ. ໂປໂລຂຽນພະທຳໂລມຈາກເມືອງໃດ? ______
   ງ. ໝາຍໂດຍອັກສອນໃດ? ______
   ຈ. ໂປໂລຕັ້ງໃຈໄປທາງທິດຕາເວັນອອກ ເອົາການສິ່ງເຄາະໄປກຸງໃດກ່ອນ? ______
   ສ. ໝາຍໂດຍອັກສອນໃດ? ______
3. ໂປໂລຢາກໄປປະກາດໃນປະເທດໃດ ທີ່ຢູ່ສຸດທິດຕາເວັນຕົກ? ______
4. ກ. ໃນພະທຳໂລມ ໂປໂລກ່າວຄຳສອນຕໍ່ສອງຊາດໃດ? ______
   ຂ. ສອນເລື່ອງການຊົງຖືວ່າຢ່າງໃດເປັນຕົ້ນ? ______
5. ກ. ໃນພະທຳໂລມບົດໃດ ທີ່ໂປໂລສະແດງຄຳນັບຖືສ່ວນຕົວ? ______
   ຂ. ບົດໃດທີ່ໂປໂລຂໍໃຫ້ຄຼິດສະຕະຈັກໂລມ ຊ່ວຍຈັດສິ່ງໃຫ້ເດີນທາງໄປປະກາດພະທຳຕໍ່? _
6. ກ. ໂປໂລຝາກຄວາມຄິດເຖິງໄປຍັງສອງຜົວເມຍໃດ ທີ່ຫາກໍຍ້າຍກັບໄປກຸງໂລມ? ______
   ______
   ຂ. ສອງຜົວເມຍນັ້ນເປັນຊາດໃດ? ______

# ເສັງປາຍບົດທີ 4

1. ໃນ ໂລມ ບົດທີ 1, 2 ແລະ 3. ໂປໂລເນັ້ນວ່າທັງຊາດຢິວແລະຄົນຕ່າງຊາດເປັນຄົນບາບທຸກຄົນ.
   ກ. ບົດໃດ ກ່າວເລື່ອງບາບຂອງຊາດຢິວໂດຍຊະເພາະ? ______
   ຂ. ບົດໃດ ກ່າວເລື່ອງບາບຂອງຄົນຕ່າງຊາດໂດຍຊະເພາະ? ______
   ຄ. ບົດໃດ ກ່າວເລື່ອງຄວາມບາບຂອງທັງສອງຊາດ? ______

2. ໃນ ໂລມ ບົດທີ 4 ແລະ 5. ສອນເລື່ອງການຖືວ່າເປັນຄົນຊອບທຳ ແລ້ວຍົກຕົວຢ່າງມາ ປຽບທຽບ.
   ກ. ໃນບົດທີ 4 ເອົາໃຜຈາກພະຄຳພີເດີມມາປຽບທຽບ? ____________________
   ຂ. ໃນບົດທີ 5 ຍົກໃຜມາປຽບທຽບຄວາມແຕກຕ່າງ? ____________________

3. ໃນໂລມ ບົດທີ 6, 7 ແລະ 8. ການສາມາດດຳເນີນຊີວິດຕາມຄວາມຊອບທຳ.
   ກ. ຍົກຄຳປຽບທຽບຈາກພິທີໃດມາອ້າງເຖິງການຕາຍແກ່ຄວາມຜິດບາບ ແຕ່ດຳເນີນຊີວິດໃນ ພະຄຼິດ ໃນບົດທີ 6? ____________________
   ຂ. ໃນບົດດຽວກັນນີ້(ບົດ 6) ເພິ່ນສອນເລື່ອງທີ່ຈະເລີກບໍ່ເປັນຂ້ອຍຂ້າຂອງຄວາມບາບ ຈຶ່ງຈະ ເປັນ ຂ້ອຍຂ້າຂອງຫຍັງ? ____________________
   ຄ. ໃນບົດທີ 7. ຍົກເລື່ອງຫຍັງມາເປັນຂໍ້ປຽບທຽບ? ____________________

4. ກ. ໂລມບົດໃດ ທີ່ສອນວ່າບໍ່ມີຄົນຊອບທຳຈັກຄົນ? ____________________
   ຂ. ໂລມບົດໃດ ສອນເລື່ອງການຊົງຖືວ່າເປັນຄົນຊອບທຳໄດ້? ____________________
   ຄ. ໂລມບົດໃດ ສອນວ່າເຮົາສາມາດດຳເນີນຊີວິດຕາມຄວາມຊອບທຳໄດ້? __________

# ເສັ້ງຫຼັງປະຊຸມບົດທີ 4

1. ໂລມບົດໃດສອນເລື່ອງ ບາດກ້າວ 4 ປະການ ໃນການປະກາດຂ່າວປະເສີດ? __________

2. ໂປໂລຍົກຕົວຢ່າງຈາກການປູກຝັງ ຊຶ່ງປຽບທຽບກັບການປະກາດພະທຳສອງປະການ.
   ກ. ການປູກປຽບທຽບກັບຫຍັງ? ____________________
   ຂ. ການຫົດນ້ຳປຽບທຽບກັບຫຍັງ? ____________________

3. ກ. ໃນ 1 ໂກລິນໂທ ບົດໃດຂໍ້ໃດ ທີ່ໂປໂລສອນເລື່ອງ 2 ປະການນັ້ນ? __________
   ຂ. ພະເຢຊູສັ່ງໃຫ້ເຮົາປະກາດຕາມທັງສອງປະການນັ້ນໃນພະທຳມັດທາຍ ບົດໃດຂໍ້ໃດ? _____

4. ກ. ຖ້າຜູ້ປະກາດ ແຈກໃບປິວຫຼືກ່າວຄຳພະຍານໃຫ້ເພື່ອນບ້ານຟັງ ຈະເປັນການປູກ ຫຼື ການຫົດນ້ຳ? ____________________
   ຂ. ຖ້າຈະສອນ "ຊີວິດຢ່າງຄົບບໍລິບູນ" ຫຼື ຫຼັກສູດອື່ນ ໆ ສອນຄຼິດສະຕຽນໃໝ່ ຈະປຽບກັບ ຫຍັງ? ____________________

# ເສັ້ງຕົ້ນບົດທີ 5

1. ໃນລະຫວ່າງ 3 ເດືອນ, ທີ່ໂປໂລຢູ່ໂກລິນໂທ ໂປໂລຂຽນພະທຳໂລມ. ຫຼັງຈາກນັ້ນເພິ່ນຕັ້ງໃຈຈະໄປ ປະເທດຊີເລຍໂດຍກົງ.
   ກ. ແທນທີ່ຈະໄປຊີເລຍ ໂປໂລໄປເມືອງໃດໃນແຂວງມາເກໂດເນຍ? ________________
   ຂ. ຜູ້ໃດຮ່ວມເດີນທາງກັບເຂົາ ຕັ້ງແຕ່ເມືອງນັ້ນເປັນຕົ້ນໄປ? ______________________
   ຄ. ເປັນຫຍັງໂປໂລປ່ຽນໃຈໄປທາງໃໝ່? ____________________________________
   ງ. ຫຼາຍຄົນໄປນຳ ໄປເຮັດຫຍັງ? ________________________________________

   ____________________________________________________________

2. ຈາກມາເກໂດເນຍແລ້ວ ເຂົາຂ້າມໄປເມືອງໂທອາດ.
   ກ. ໂທອາດໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ________________________
   ຂ. ໃນເມືອງໂທອາດ ມີຊາຍໜຸ່ມຕາຍຢ່າງໃດ? ______________________________
   ຄ. ໂປໂລເຮັດການອັດສະຈັນຢ່າງໃດ? ____________________________________

3. ຈາກໂທອາດເຂົາໄປເມືອງມີເລໂຕ.
   ກ. ມີເລໂຕໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ________________________

4. ກ. ປົກກະຕິໂປໂລເດີນທາງຮ່ວມກັບຫຼາຍຄົນ. ແຕ່ເມື່ອເດີນຈາກໂທອາດໄປເຖິງອາໂຊ ໝູ່ເພິ່ນໄປທາງ ເຮືອ ແຕ່ໂປໂລໄປຢ່າງໃດ? ________________________________
   ຂ. ໂປໂລອາດຈະຢາກໄປຜູ້ດຽວ ເພື່ອຈະຊອກຫາການຊີ້ນຳຈາກພະເຈົ້າໃນເລື່ອງໃດ? ___

   ____________________________________________________________

5. ເຂົາບໍ່ໄດ້ແວ່ເມືອງເອເຟໂຊ ເພາະໂປໂລຟ້າວຟັ່ງທີ່ຈະໄປເຖິງກຸງເຢລູຊາເລັມກ່ອນເທດສະການ.
   ກ. ພວກໃດເດີນທາງໄປຫາໂປໂລຢູ່ມີເລໂຕ? ________________________________
   ຂ. ເອເຟໂຊໝາຍໄວ້ໂດຍອັກສອນໃດ ໃນແຜນທີ່ໜ້າ 144? ______________________
   ຄ. ໂປໂລເຕືອນເຂົາເລື່ອງຫຍັງ? ________________________________________

# ເສັ້ງປາຍບົດທີ 5

1. ກ. ເຂົາສວຍໂອກາດລົງຈາກເຮືອໃນເມືອງໃດ? ______________________________
   ຂ. ພີ່ນ້ອງໃນເມືອງນັ້ນ ເຕືອນບໍ່ໃຫ້ໂປໂລໄປໃສ? ____________________________
   ຄ. ເຂົາບອກເລື່ອງນັ້ນ ໂດຍອຳນາດຂອງໃຜ? ______________________________

2. ກ. ເຂົາເລີກຈາກການເດີນເຮືອໃນເມືອງໃດ? ________________________________
   ຂ. ໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ______________________________
   ຄ. ພັກໃນເຮືອນຂອງໃຜ? ____________________________________________
   ງ. ແມ່ນໃຜໃນຄອບຄົວນັ້ນທີ່ປະກາດພະທຳ? ______________________________

ຈ. ຜູ້ທຳນວາຍທີ່ເຕືອນບໍ່ໃຫ້ໂປໂລໄປກຸງເຢລູຊາເລັມຊື່ຫຍັງ? ____________________

ສ. ເພິ່ນສະແດງເລື່ອງນັ້ນ ໂດຍເຮັດຫຍັງ? ____________________________________

ຊ. ໂປໂລຕອບຢ່າງໃດ? ____________________________________________

____________________________________________________________

3. ກ. ໂປໂລເອົາຄວາມຊ່ວຍເຫຼືອຈາກເຫຼົ່າຄຼິດສະຕະຈັກຄົນຕ່າງຊາດ ມອບໃຫ້ຄຼິດສະຕະຈັກໃນກຸງເຢລູຊາເລັມ. ຈາກນັ້ນຢາໂກໂບຊັກຊວນໃຫ້ໂປໂລເຮັດຫຍັງເພື່ອເອົາໃຈຄົນຢິວ? ___

   ຂ. ເຖິງວ່າໂປໂລພະຍາຍາມເອົາໃຈຄົນຢິວຢ່າງນັ້ນກໍຕາມ ອີກບໍ່ດົນເຂົາຈະເຮັດຫຍັງກັບໂປໂລ? ____________________________________________________

   ຄ. ແມ່ນໃຜຊ່ວຍຊີວິດໂປໂລ? ________________________________________

   ງ. ກຸງເຢລູຊາເລັມໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ___________________

4. ນາຍພັນທະຫານໂລມຄົນນັ້ນ ໄປຍຶດເອົາໂປໂລແລະຈະຮັກສາໄວ້ໃນຄ້າຍທະຫານ ແຕ່ຕອນທີ່ເຂົາຈະ ຂຶ້ນຂັ້ນໄດ ໂປໂລຂໍອະນຸຍາດກ່າວຄຳປາໄສໃຫ້ປະຊາຊົນຟັງ.

   ກ. ໂປໂລປາກພາສາໃດ? ____________________________________________

   ຂ. ປະຊາຊົນຟັງຄຳພະຍານຂອງໂປໂລຢ່າງໃດ? ______________________________

   ຄ. ຕັ້ງໃຈຟັງດີ ຈົນເຖິງໂປໂລກ່າວຢ່າງໃດ? ________________________________

   ____________________________________________________________

5. ເຂົາຂັງນໂປໂລ ແຕ່ໂປໂລອ້າງສິດວ່າເພິ່ນເປັນຫຍັງ? __________________________

6. ກ. ມື້ຕໍ່ມາ ນາຍພັນສັ່ງໃຫ້ໂປໂລຜະເຊີນໜ້າກັບໃຜ? __________________________

   ຂ. ສານນັ້ນ ແບ່ງເປັນສອງພວກໃດ? __________________ ແລະ ______________

   ຄ. ມະຫາປະໂລຫິດຢູ່ຝ່າຍໃດ? ________________________________________

   ງ. ມະຫາປະໂລຫິດສັ່ງຄົນທີ່ຢືນຢູ່ໃກ້ໂປໂລ ໃຫ້ເຮັດຫຍັງ? _______________________

   ຈ. ໂປໂລຍົກເລື່ອງຫຼັກຄວາມເຊື່ອໃດ ຈຶ່ງເຮັດໃຫ້ສອງພວກໃນສານນັ້ນຜິດຖຽງກັນ? ______

   ____________________________________________________________

   ສ. ໃນສອງພວກນັ້ນ ພວກໃດເຊື່ອເລື່ອງການຄືນຈາກຕາຍ? ______________________

   ຊ. ພວກໃດປະຕິເສດ? ______________________________________________

   ຍ. ແມ່ນໃຜຊ່ວຍຊີວິດໂປໂລ ໂດຍເອົາໄປຄ້າຍທະຫານ? _________________________

7. ກ. ໃນຄືນດຽວກັນນັ້ນ ມີໃຜມາຢືນຢູ່ໃກ້ໂປໂລ? ______________________________

   ຂ. ພະອົງບອກວ່າໂປໂລຈະຕ້ອງເປັນພະຍານຢູ່ໃສ? ____________________________

   ຄ. ໂປໂລຖືວ່າໃຜເປັນມະຫາປະໂລຫິດທີ່ແທ້ຈິງ? _____________________________

   ງ. ພະທຳເຮັບເລີ ສອນຫຼາຍເລື່ອງພະເຢຊູຢູ່ໃນຕຳແໜ່ງໃດ? ______________________

# ເສັ້ງຫຼັງປະຊຸມບົດທີ 5

1. ກ. ສາມບົດໃດໃນພະທຳໂລມ ທີ່ສ້າງໃຫ້ມີຄວາມສຳພັນອັນດີລະຫວ່າງຊາດຢິວແລະຄົນຕ່າງຊາດ? ______________________________

   ຂ. ໂປໂລເຊື່ອຟັງຕາມຄຳສັ່ງຂອງພະເຢຊູ, ພະເຢຊູສັ່ງໃຫ້ຮັກໃຜ? ________________

2. ໃນໂລມ ບົດທີ 9. ໂປໂລຍົກຊ່າງຢ່າງໃດ ມາປຽບທຽບວ່າພະເຈົ້າມີສິດທີ່ຈະສະແດງພະກະລຸນາ ຕໍ່ຄົນທີ່ພະເຈົ້າເລືອກໄວ້? ______________________________

3. ໃນໂລມ ບົດທີ 10. ໂປໂລຊັກຊວນໃຫ້ພີ່ນ້ອງຄຼິດສະຕຽນອອກໄປເຮັດຫຍັງ? __________

4. ໃນຄຳອຸປະມາເລື່ອງຕົ້ນກອກເທດ ໃນໂລມ 11:17-24.

   ກ. ຕົ້ນກອກເທດໃນສວນ ປຽບທຽບກັບຄົນຂອງພະເຈົ້າ ຄື ຊາດໃດ? _______________

   ຂ. ຕົ້ນກອກເທດປ່າ ປຽບທຽບກັບຄົນຊາດໃດ? ______________________________

   ຄ. ກິ່ງກອກເທດທີ່ຖືກຫັກອອກເສຍ ປຽບທຽບກັບຊາດຢິວທີ່ເຊື່ອ ຫຼືຊາດຢິວທີ່ບໍ່ເຊື່ອ?

   ______________________________

   ງ. ກິ່ງກອກເທດປ່າ ທີ່ມາຕໍ່ແທນກິ່ງກອກເທດສວນທີ່ຖືກຫັກອອກ ປຽບທຽບເຖິງຄົນພວກໃດ?

   ______________________________

   ຈ. ກິ່ງກອກເທດສວນຊຶ່ງຖືກຫັກອອກ ແລ້ວຖືກຕໍ່ໄວ້ອີກ ອ້າງເຖິງພວກໃດ? ___________

# ເສັ້ງຕົ້ນບົດທີ 6

1. ກ. ມີຄົນຍິວຈັກຄົນສາບານວ່າຈະຂ້າໂປໂລ? ______________________________
   ຂ. ແມ່ນໃຜທີ່ໄດ້ຍິນເລື່ອງແລ້ວໄປລາຍງານຕໍ່ນາຍພັນ? ______________________
   ຄ. ນາຍພັນລີເຊຍ ໃຫ້ໝູ່ທະຫານສົ່ງໂປໂລໄປເມືອງໃດ? ______________________
   ງ. ເມືອງນັ້ນ ໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ____________________
   ຈ. ຜູ້ນຳໃນຄຼິດສະຕະຈັກເມືອງນັ້ນຊື່ຫຍັງ? _______________________________
   ສ. ໃຜໃນຄຼິດສະຕະຈັກນັ້ນ ທຳນວາຍວ່າໂປໂລຈະຖືກຜູກມັດໄວ້ໃນເຢລູຊາເລັມ? ______
   ຊ. ຫຼັງຈາກຄຳທຳນວາຍນັ້ນອີກຈັກວັນ ໂປໂລກັບມາເປັນນັກໂທດ? ______________
   ຍ. ໂປໂລຖືກຂັງໄວ້ໃນເມືອງນັ້ນດົນປານໃດ? _____________________________

2. ໂປໂລມີໂອກາດເປັນພະຍານຕໍ່ໜ້າເຈົ້າໜ້າທີ່ສູງສາມຄົນ ແລະເມຍຂອງເຂົາສອງຄົນ. ໃຫ້ທ່ານຈົດຊື່ເຂົາໄວ້:
   ກ. ________________________ ແລະເມຍ ຊື່ວ່າ ________________________
   ຂ. ________________________________________________________________
   ຄ. ກະສັດ __________________ ແລະ ພະນາງ ___________________________

3. ໃນ5 ຄົນນັ້ນ.
   ກ. ຄົນໃດເປັນຊາດໂລມ? ____________________________________________
   ຂ. ຄົນໃດເປັນຊາດປະສົມ? __________________________________________
   ຄ. ເມື່ອໂປໂລກ່າວເຖິງຄວາມຍຸດຕິທຳ ການບັງຄັບໃຈ ແລະການພິພາກສາ ແມ່ນຄົນໃດ ທີ່ສະດຸ້ງ ຕົກໃຈ? _____________________________________________________
   ງ. ມະຫາປະໂລຫິດໃຫ້ທະນາຍຄວາມຟ້ອງໂປໂລຕໍ່ໜ້າໃຜ? ____________________
   ຈ. ໂປໂລຂໍອຸທອນໄປເຖິງເຈົ້າຈັກກະພັດກາຍຊາ ຕໍ່ຜູ້ປົກຄອງໃດ? ______________
   ສ. ຄົນໃດຮ້ອງວ່າໂປໂລເປັນບ້າ? _____________________________________
   ຊ. ຜູ້ໃດເຍາະເຍີ້ຍວ່າ ໂປໂລຢາກຊັກຊວນໃຫ້ເປັນຄຼິດສະຕຽນ? _________________

4. ໃນເມື່ອໂປໂລຢູ່ກາຍຊາເລຍນັ້ນ ໂປໂລສວຍໂອກາດກ່າວຂ່າວປະເສີດໃຫ້ຄົນມີຕຳແໜ່ງໃດຟັງ ເປັນຕົ້ນ? ____________________________________________________

# ເສັ້ງປາຍບົດທີ 6

1. ນາຍຮ້ອຍຄົນທີ່ເອົາໂປໂລໄປກຸງໂລມ ຊື່ຫຍັງ? _______________________________

2. ພີ່ນ້ອງຄຼິດສະຕຽນສອງຄົນໃດໄປນຳ? ____________________________________

3. ກ. ທ່າງາມ ທີ່ເຮືອເຂົາຈອດຄາວໜຶ່ງ ຢູ່ເກາະໃດ? ___________________________
   ຂ. ໝາຍໃນແຜນທີ່ໜ້າ 144 ໂດຍອັກສອນໃດ? ___________________________
   ຄ. ອອກຈາກທ່ານັ້ນ ເກີດມີອຸບັດຕິເຫດຢ່າງໃດ? _________________________

ງ. ວັນເທດສະການໃດ ຜ່ານໄປແລ້ວ? ___________________________________

4. ໂປໂລເປັນຕົວຢ່າງທີ່ດີຕໍ່ໜ້າຄົນທີ່ເດີນທາງນຳ. ໃຫ້ບອກຢ່າງນ້ອຍ 3 ປະການ?
(ຍົກ 3 ປະການ ຈາກກ່ອງ 4 ຫຼຸ່ງມໜ້າ 106)
ກ. _______________________________________________________________
ຂ. _______________________________________________________________
ຄ. _______________________________________________________________

5. ກ. ເຮືອແຕກເສຍຢູ່ເກາະໃດ? _______________________________________
ຂ. ໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ____________________________
ຄ. ເຂົາອອກຈາກທ່າງາມຈັກວັນ ເຮືອຈຶ່ງແຕກເສຍຫາຍ? ______________________

6. ກ. ຜູ້ໃຫຍ່ໃນເກາະນັ້ນທີ່ຕ້ອນຮັບພວກເຂົາແລະລ້ຽງໄວ້ 3 ວັນຊື່ຫຍັງ? ______________
ຂ. ລູກາລາຍງານເລື່ອງການອັດສະຈັນສອງປະການໃດ ໃນເກາະນັ້ນ? ______________
_______________________________________________________________
_______________________________________________________________

7. ເຫັນພີ່ນ້ອງຄຼິດສະຕຽນຕ້ອນຮັບໂປໂລກັບໝູ່ບ່ອນໃດແດ່? ______________________
_______________________________________________________________

8. ສຸດທ້າຍມາເຖິງກຸງໂລມໝາຍໂດຍອັກສອນໃດ ໃນແຜນທີ່ໜ້າ 144? ______________

# ເສັ້ງຫຼັງປະຊຸມບົດທີ 6

1. ໃນພະທຳຟີລິບປອຍ ໂປໂລກ່າວເລື່ອງຄວາມຍິນດີ. ໃຫ້ທ່ານຈົດເຫດທີ່ມີຄວາມຍິນດີ ແລ້ວຈົດບົດ ແລະຂໍ້ ທີ່ເຫັນໃນພະທຳຟີລິບປອຍ.
ກ. ເຫດ __________________________________________. ບົດ, ຂໍ້ _________
ຂ. ເຫດ __________________________________________. ບົດ, ຂໍ້ _________
ຄ. ເຫດ __________________________________________. ບົດ, ຂໍ້ _________

2. ບົດໃດຂໍ້ໃດ ທີ່ຂຽນໃນພະທຳຟີລິບປອຍ ຄ້າຍຄືເປັນຄຳກອນສັນລະເສີນພະເຢຊູ? _______

3. ກ. ເມື່ອໂປໂລເຕືອນໃຫ້ລືມສິ່ງທີ່ຜ່ານພົ້ນໄປແລ້ວ ເພິ່ນຍົກຄວາມປຽບທຽບກັບກິລາໃດ? __
_______________________________________________________________
ຂ. ຄວນໂນ້ມຕົວອອກໄປຫາສິ່ງໃດ? ____________________________________
ຄ. ເລື່ອງນັ້ນເຫັນໃນຟີລິບປອຍ ບົດໃດຂໍ້ໃດ? _______________________________

# ເສັ່ງຕົ້ນບົດທີ 7

1. ກ. ໃນສະໄໝທີ່ໂປໂລໄປກຸງໂລມນັ້ນ, ມີຄົນຢູ່ຈັກຄົນໃນກຸງໂລມ? ________________
   ຂ. ເທື່ອທຳອິດໂປໂລຢູ່ກຸງໂລມຈັກປີ? ________________
   ຄ. ຢູ່ເຮືອນແບບໃດ? ________________
   ງ. ແມ່ນໃຜ ເຝົ້າທັງກາງວັນກາງຄືນ? ________________
2. ຢູ່ມາໄດ້ 3 ວັນແລ້ວ, ໂປໂລເຊີນພວກໃດມາຢ້ຽມ? ________________
3. ແລະມີແຂກອີກຫຼາຍຄົນທີ່ມາຢ້ຽມ.
   ກ. ຜູ້ໜຶ່ງນັ້ນເປັນຄົນທີ່ເຄີຍຜິດໃຈກັບໂປໂລ. ຕໍ່ມາໂປໂລຍົກຜິດໃຫ້ ຄືໃຜ? ________________
   ຂ. ອີກຄົນໜຶ່ງທີ່ໜີຈາກການເປັນທາດ. ຈາກນັ້ນເພິ່ນຮັບເຊື່ອໃນພະອົງ ແລ້ວໂປໂລບອກໃຫ້ກັບໄປມອບຕົວໄວ້ ກັບນາຍຄົນເກົ່າ ຄືໃຜ? ________________
4. ກ. ໂປໂລຝາກຈົດໝາຍໃຫ້ນາຍນັ້ນ. ເພິ່ນຊື່ຫຍັງ? ________________
   ຂ. ຢູ່ເມືອງໃດ? ________________
   ຄ. ໂປໂລຂໍໃຫ້ຟີເລໂມນ ຕ້ອນຮັບເອົາໂອເນຊີໂມອີກ ແຕ່ບໍ່ໃຫ້ຖືວ່າເປັນຂ້ອຍຂ້າອີກ. ຖືວ່າເປັນຫຍັງ? ________________
5. ເມື່ອຢູ່ໂລມ ໂປໂລໃຊ້ຄົນອື່ນໄປຢ້ຽມຄຣິດສະຕະຈັກຕ່າງໆ.
   ກ. ໃຊ້ຕີໂມທຽວໄປໃສ? ________________
   ຂ. ໃຊ້ຕີຊີໂກໄປໃສ? ________________
6. ໃນລາຍຊື່ພະທຳຕໍ່ໄປນີ້ ແມ່ນພະທຳໃດທີ່ໂປໂລ ຫຼືລູກາອາດຈະຂຽນຈາກກຸງໂລມໃນຄາວທີ່ໂປໂລ ຖືກຂັງໄວ້ໃນເຮືອນເຊົ່າ. (ໃຫ້ເລືອກ)

| | | |
|---|---|---|
| ກ. ຂ່າວປະເສີດລູກາ. | ຂ. ເອເຟໂຊ. | ຄ. ກິດຈະການ. |
| ງ. ຟີລິບປອຍ. | ຈ. 2 ໂກລິນໂທ. | ຍ. ໂລມ. |
| ສ. 1 ເທຊະໂລນິກ. | ດ. ຟີເລໂມນ. | ຕ. ໂກໂລຊາຍ. |

7. ໂປໂລຂຽນຈົດໝາຍຈາກໂລມໄປເຖິງຄຣິດສະຕະຈັກໃດ ທີ່ຫາຍໄປແລ້ວ? ________________
8. ເມື່ອຢູ່ກຸງໂລມນັ້ນ ໂປໂລຮັບໃຊ້ພະເຈົ້າໃນ 4 ດ້ານໃດ?
   ກ. ________________
   ຂ. ________________
   ຄ. ________________
   ງ. ________________

# ເສັ້ງປາຍບົດທີ 7

1. ກ. ໂປໂລຂຽນຄຳຂໍໃຫ້ຟີເລໂມນຈັດແຈງຫຍັງໄວ້? ____________________________
   ຂ. ຫຼັງຈາກຖືກຂັງໄວ້ເທື່ອທຳອິດ ເຂົາປ່ອຍໂປໂລໄປປະມານຈັກປີ? ________________
2. ໃນຄາວຖືກປ່ອຍນັ້ນ ໂປໂລຂຽນຈົດໝາຍໄປເຖິງສອງຄົນໃດ? (ໃຫ້ຕື່ມຄວາມ)
   ກ. ຂຽນເຖິງ ______________ ໃນເມືອງ ________________ ໝາຍໂດຍອັກສອນ _______ ໃນແຜນທີ່ໜ້າ 144.
   ຂ. ຂຽນເຖິງ ______________ ຢູ່ເກາະ ________________ ໝາຍໂດຍອັກສອນ ________ ໃນແຜນທີ່ໜ້າ 144.
3. ພະທຳທັງສອງນັ້ນ ແຈ້ງເລື່ອງຄຸນສົມບັດພວກໃດ? ____________________________
4. ໃຫ້ທ່ານບອກຢ່າງນ້ອຍສອງບ່ອນທີ່ໂປໂລໄປຢ້ຽມໃນຄາວຖືກປ່ອຍ.

   ______________________________________________________________

   ______________________________________________________________

   ______________________________________________________________
5. ກ. ຈົດໝາຍສຸດທ້າຍທີ່ໂປໂລຂຽນ ຄື ຈົດໝາຍໃດ? ____________________________
   ຂ. ຂຽນຈາກໃສ? ________________________________________________
   ຄ. ອີກບໍ່ດົນນັ້ນໂປໂລຖືກຫຍັງ? __________________________________________
6. ຖືກຂັງໄວ້ໃນກຸງໂລມເທື່ອທີສອງ. ຕ່າງກັນກັບເທື່ອທຳອິດຢ່າງໃດ? __________________

   ______________________________________________________________
7. ກ. ເມື່ອເທື່ອທີສອງນີ້ ໃຜເປັນເຈົ້າຈັກກະພັດໂລມ? ____________________________
   ຂ. ເຈົ້າຈັກກະພັດເນໂລ ຂ້າຄຣິດສະຕຽນຫຼາຍຄົນຕັ້ງແຕ່ປີໃດ? ____________________
   ຄ. ຄຣິດສະຕຽນຫຼາຍຄົນຕ້ອງລີ້ຢູ່ໃສ? ______________________________________
   ງ. ເມື່ອໂປໂລຖືກສອບສວນຄະດີເທື່ອທຳອິດ ມີຜູ້ໃດເຂົ້າຂ້າງໂປໂລ? ________________

   ______________________________________________________________
8. ເມື່ອນັ້ນໂປໂລຍັງສວຍໂອກາດປະກາດຫຍັງໃຫ້ສານຟັງ? _________________________
9. ກ. ສຸດທ້າຍເຂົາຂ້າໂປໂລຢ່າງໃດ? __________________________________________
   ຂ. ແມ່ນໃຜຄອຍຖ້າຕ້ອນຮັບໂປໂລ? __________________________________________